# ສັນຍາຊົ່ວຄາວ
# ວ່າດ້ວຍການແກ້ໄຂ ກິດຈະການຊາຍແດນ ລະຫວ່າງ
# ລັດຖະບານ ສປປ ລາວ ແລະ ລັດຖະບານ ສປ ຈີນ

*********

ເພື່ອປັບປຸງແລະເສີມຂະຫຍາຍສາຍພົວພັນມິດຕະພາບຖານບ້ານໃກ້ເຮືອນຄຽງທີ່ດີ ລະຫວ່າງສອງປະເທດ, ພ້ອມກັນປົກປັກຮັກສາ ຄວາມໝັ້ນຄົງ ແລະ ຄວາມສະຫງົບສຸກ ຕາມເຂດຊາຍແດນ ລະຫວ່າງສອງປະເທດ, ບົນພື້ນຖານ ເຄົາລົບນັບຖືອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງກັນແລະກັນ, ບໍ່ຮຸກຮານກັນ, ບໍ່ແຊກແຊງເຂົ້າກິດຈະການພາຍໃນ ຂອງກັນແລະກັນ, ສະເໝີພາບ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະຢູ່ຮ່ວມກັນໂດຍສັນຕິ.

ບົນຈິດໃຈຮ່ວມມືແລະເຂົ້າອົກເຂົ້າໃຈກັນ ເພື່ອແກ້ໄຂບັນຫາຕາມຊາຍແດນ, ພ້ອມທັງອຳນວຍຄວາມສະດວກ ໃຫ້ແກ່ການໄປມາຫາສູ່ກັນແລະການດຳລົງຊີວິດຂອງປະຊາຊົນ ຕາມເຂດຊາຍແດນ ລະຫວ່າງສອງປະເທດ, ເພື່ອສ້າງຊາຍແດນ ລະຫວ່າງລາວ-ຈີນ ໃຫ້ກາຍເປັນຊາຍແດນ ສັນຕິພາບ ແລະ ມິດຕະ ພາບ.

ລັດຖະບານ ສປປ ລາວ ແລະ ລັດຖະບານ ສປ ຈີນ ໄດ້ຕົກລົງເຊັນສັນຍາຊົ່ວຄາວ ວ່າດ້ວຍການແກ້ໄຂ ກິດຈະການຊາຍແດນ ລະຫວ່າງສອງປະເທດ,ເຫັນດີຕົກລົງກັນດ້ວຍບັນດາມາດຕາດັ່ງລຸ່ມນີ້:

## ພາກທີ່ ໜຶ່ງ
## ວ່າດ້ວຍການປົກປັກຮັກສາ
## ເສັ້ນຊາຍແດນ ແລະຫລັກໝາຍຊາຍແດນ

### <u>ມາດຕາ 1</u>

1. ເສັ້ນຊາຍແດນ ລະຫວ່າງ ສປປ ລາວ ແລະ ສປ ຈີນ ໄດ້ຖືກກຳນົດແລ້ວໃນສົນທິສັນຍາເພີ່ມເຕີມ ແກ່ສົນທິສັນຍາ ວ່າດ້ວຍການກຳນົດ ເສັ້ນຊາຍແດນ ລະ

ຫວ່າງຕັງແກງ ແລະ ຈີນ (ເມື່ອວັນທີ ໒໖ ມິຖຸນາ ປີ ໑໘໘໗) ທີ່ໄດ້ເຊັນກັນເມື່ອ ວັນທີ ໒໐ ມິຖຸນາ ໑໘໙໕.

ທັງສອງຝ່າຍ ມີພັນທະເຄົາລົບນັບຖື ເສັ້ນຊາຍແດນ ລະຫວ່າງສອງປະເທດ ທີ່ໄດ້ກຳນົດໄວ້ ໃນສົນທິສັນຍາເພີ່ມເຕີມ, ພ້ອມທັງດຳເນີນການຄຸ້ມຄອງຕາມເສັ້ນຊາຍແດນດັ່ງກ່າວ. ສຳລັບໃນບາງສ່ວນ ທີ່ສອງຝ່າຍເຫັນວ່າ ໃນຄວາມເປັນຈິງ ປະຈຸບັນມີອັນບໍ່ສອດຄ່ອງ ກັບສົນທິສັນຍາເພີ່ມເຕີມ ລະຫວ່າງຕັງແກງ ແລະ ຈີນ ນັ້ນ, ທັງສອງຝ່າຍເຫັນດີ ໃນເວລາຈຳເປັນສາມາດດຳເນີນ ການສຳຫລວດ ກວດກາເສັ້ນຊາຍແດນ ແລະ ຫຼັກຫມາຍຊາຍແດນຄືນໃໝ່ໄດ້. ຖ້າມີບັນຫາຫຍັງ ລັດຖະບານ ທັງສອງຝ່າຍ ຈະພິຈາລະນາແກ້ໄຂນຳກັນ. ກ່ອນການສຳຫລວດກວດກາ ດັ່ງກ່າວນັ້ນ ທັງສອງຝ່າຍຕ້ອງດຳເນີນການຄຸ້ມຄອງ ຕາມສະພາບຕົວຈິງ ໃນປະຈຸບັນ, ຫ້າມບໍ່ໃຫ້ ຝ່າຍໃດຝ່າຍນຶ່ງປ່ຽນແປງ ສະພາບເສັ້ນຊາຍແດນ ໃນປະຈຸບັນຕາມ ລຳພັງໃຈ.

໒. ສິດໃນການແກ້ໄຂ ບັນຫາເສັ້ນຊາຍແດນທັງໝົດລະຫວ່າງສອງປະເທດແມ່ນຂຶ້ນກັບລັດຖະບານ ສູນກາງຂອງສອງປະເທດ, ບັນດາຂະແໜງການ ແລະ ເຈົ້າ ໜ້າທີ່ທ້ອງຖິ່ນ ຂອງສອງຝ່າຍບໍ່ມີສິດປ່ຽນແປງໃດໆກ່ຽວກັບເສັ້ນຊາຍແດນແລະຫລັກໝາຍຊາຍແດນ ລະຫວ່າງ ສອງປະເທດ, ຖ້າບໍ່ດັ່ງນັ້ນຈະຖືວ່າ ການຕົກລົງນັ້ນ ບໍ່ມີຄຸນຄ່າຈະຕ້ອງຖືກລົບລ້າງ.

## <u>ມາດຕາ ໒</u>

໑. ໃນເວລາລໍຖ້າການສຳຫລວດກວດການັ້ນ, ທັງສອງຝ່າຍ ຈະບໍ່ໃຫ້ມີ ການແຕະຕ້ອງ ເຖິງຫລັກໝາຍຊາຍແດນ ແລະເຄື່ອງໝາຍຊາຍແດນຕ່າງໆ ທີ່ມີຢູ່ ໃນປະຈຸບັນ, ພ້ອມກັນນັ້ນ ທັງສອງຝ່າຍຈະປຶກສາ ຫາລືກັນ ແລະ ດຳເນີນມາດ ຕະການ ທີ່ຈຳເປັນ ເພື່ອປ້ອງກັນ ບໍ່ໃຫ້ຫລັກໝາຍຊາຍແດນ ແລະ ເຄື່ອງໝາຍຊາຍແດນ ຖືກຍົກຍ້າຍໂດຍລຳພັງ, ເຮັດໃຫ້ເປ່ເພ ແລະ ທຳລາຍ.

ຖ້າມີຫລັກໝາຍຊາຍແດນ ທີ່ຖືກຍົກຍ້າຍ, ເປ່ເພຫລືລົ້ມບອນ ແມ່ນໃຫ້ຮັກສາປະໄວ້ ໃນສະພາບເດີມໄວ້ກ່ອນ.

໒. ການບົວລະບັດປົກປັກຮັກສາ ຫລັກໝາຍຊາຍແດນ ແລະ ເຄື່ອງໝາຍຊາຍແດນຕ່າງໆ ທີ່ມີໃນປະຈຸບັນ ທັງສອງຝ່າຍ ແບ່ງຄວາມຮັບຜິດຊອບດັ່ງລຸ່ມນີ້:

- ຫລັກໝາຍເລກຄີກ ແມ່ນໃຫ້ຝ່າຍລາວຮັບຜິດຊອບ.

- ຫລັກໝາຍເລກຄູ່ແມ່ນໃຫ້ຝ່າຍຈີນຮັບຜິດຊອບ.

ຖ້າຫາກວ່າມີຄົນຂອງຝ່າຍໃດຝ່າຍນຶ່ງທຳລາຍ, ຍົກຍ້າຍ ຫລືເຮັດໃຫ້ຫລັກໝາຍຊາຍແດນເປ່ເພ, ຝ່າຍນັ້ນຈະຕ້ອງຮັບພາລະ ຄ່າໃຊ້ຈ່າຍທັງໝົດ ໃນການສ້ອມແປງຫລັກໝາຍນັ້ນຄືນ.

3. ໃນເມື່ອຝ່າຍໃດຝ່າຍນຶ່ງ ພົບເຫັນວ່າຫລັກໝາຍຊາຍແດນ ຖືກຍົກຍ້າຍ, ເປ່ເພ ຫລື ທຳລາຍ, ຕ້ອງແຈ້ງ ໃຫ້ອີກຝ່າຍນຶ່ງຊາບ ຍິ່ງໄວຍິ່ງດີ. ຝ່າຍທີ່ມີພາລະ ບົວລະບັດຮັກສາ ຫລັກໝາຍຊາຍແດນ ແລະເຄື່ອງໝາຍຊາຍແດນ ຕ່າງໆ ທີ່ໄດ້ ກ່າວມາເທິງນັ້ນ ຈະຕ້ອງໄດ້ສ້ອມແປງ ຫລື ກໍ່ສ້າງຄືນ ໃຫ້ຢູ່ໃນທີ່ຕັ້ງເດີມ ໂດຍຊອງໜ້າ ຜູ້ທີ່ໄດ້ຮັບການມອບໝາຍ ຂອງອີກຝ່າຍນຶ່ງ. ທັງສອງຝ່າຍ ຕ້ອງຮ່ວມກັນ ເຮັດບົດບັນທຶກ ແລະລາຍ ງານຂັ້ນເທິງຂອງຕົນ.

ຖ້າຫາກຝ່າຍໃດຝ່າຍນຶ່ງ ເຫັນມີຄວາມຈຳເປັນ ທັງສອງຝ່າຍ ສາມາດຈັດຕັ້ງໜ່ວຍກວດກາ ປະສົມ ເພື່ອດຳເນີນການກວດກາ ເສັ້ນຊາຍແດນ ແລະ ຫລັກໝາຍຊາຍແດນທັງຫມົດ ລະຫວ່າງສອງປະເທດ.ສ່ວນລະບຽບການ ດຳເນີນງານຂອງໜ່ວຍກວດກາປະສົມ ໃຫ້ຫົວໜ້າ ຂອງສອງຝ່າຍຕົກລົງກັນ.

4. ການສ້ອມແປງຫລັກໝາຍຊາຍແດນ ທີ່ຖືກເປ່ເພ,ຍົກຍ້າຍ ຫລື ທຳລາຍຄືນ ໃໝ່ນັ້ນ ຕ້ອງຮັກສາສະພາບເດີມ ຕາມຂະໜາດ, ເຄື່ອງໝາຍແລະຕົວໜັງສື ພ້ອມທັງໃຫ້ທີ່ ຕັ້ງຂອງຫລັກໝາຍຖືກກັບທີ່ຕັ້ງ ຊຶ່ງໄດ້ກຳນົດໄວ້ໃນ " ສົນທິສັນຍາເພີ່ມເຕີມ" ທີ່ໄດ້ ກ່າວມາແລ້ວນັ້ນ. ພາຍຫລັງສ້ອມແປງຄືນແລ້ວ, ທັງສອງຝ່າຍ ຈະຕ້ອງດຳເນີນການຖ່າຍຮູບຄືນໃໝ່ ຕໍ່ຫລັກໝາຍຊາຍແດນນັ້ນ, ແຕ້ມແຜນຮ່າງຫຍໍ້ ກ່ຽວກັບຫລັກໝາຍຊາຍແດນ, ພ້ອມທັງເຮັດບົດບັນທຶກ ການສ້ອມແປງຄືນນັ້ນ.

ຖ້າຫາກວ່າບໍ່ສາມາດ ສ້າງຫລັກໝາຍຊາຍແດນ ທີ່ຖືກທຳລາຍ ຫຼືເປ່ເພ ໄປແລ້ວນັ້ນ ຄືນໃໝ່ໃຫ້ຢູ່ ໃນທີ່ຕັ້ງເດີມ, ໃຫ້ໜ່ວຍກວດກາປະສົມ ຂອງສອງຝ່າຍ ປຶກສາຫາລືກັນແລ້ວນຳສະເໜີຂັ້ນເທິງຂອງຕົນ ເພື່ອກຳນົດທີ່ຕັ້ງ ຂອງຫລັກໝາຍຊາຍແດນຄືນໃໝ່. ການປັກຫລັກ ໝາຍຊາຍແດນ ແລະ ເຄື່ອງໝາຍຊາຍແດນຕ່າງໆຄືນໃໝ່ນັ້ນ ຈະບໍ່ເຮັດໃຫ້ເສັ້ນຊາຍ ແດນລະຫວ່າງ ສອງປະເທດ ມີການປ່ຽນແປງ.

5. ທັງສອງຝ່າຍສາມາດດຳເນີນການກວດກາ ແຕ່ຝ່າຍດຽວ ຕາມທິດຂອງເສັ້ນຊາຍແດນ, ຫລັກໝາຍຊາຍແດນ ແລະເຄື່ອງໝາຍຊາຍແດນຕ່າງໆ. ຖ້າຈຳເປັນມີຄວາມຕ້ອງການຂ້າມຊາຍແດນໄປເບື້ອງນັ້ນ ເພື່ອກວດກາ ຈະຕ້ອງແຈ້ງໃຫ້ຝ່າຍນຶ່ງຊາບລ່ວງໜ້າ ຢ່າງໜ້ອຍ 10 ວັນ. ໃນເມື່ອໄດ້ຮັບການຕົກລົງເຫັນດີ ຈາກຝ່າຍນຶ່ງແລ້ວຈຶ່ງດຳເນີນການກວດກາໄດ້. ຝ່າຍນັ້ນຈະຕ້ອງພະຍາຍາມ ອຳນວຍ ຄວາມສະ ດວກໃນດ້ານນີ້ ພ້ອມທັງຮັບຜິດຊອບ ຮັບປະກັນຄວາມປອດໄພ.

6. ເພື່ອປົກປັກຮັກສາເສັ້ນຊາຍແດນ, ຖ້າບໍ່ໄດ້ຮັບການຕົກລົງເຫັນດີ ຈາກສອງຝ່າຍ, ຫ້າມສ້າງເຄຫາສະຖານໃໝ່ ໃນຂອບເຂດລັດສະໝີ 100 ແມັດ ຫ່າງຈາກແຕ່ລະເບື້ອງ ຂອງເສັ້ນຊາຍແດນ.ຍົກເວັ້ນ ແຕ່ບັນດາ ເຄຫະສະຖານ ທີ່ໃຊ້ສຳລັບປົກປັກຮັກສາ ເສັ້ນຊາຍແດນ.

## ພາກທີ່ ສອງ

## ວ່າດ້ວຍການດຳເນີນການຜະລິດ ແລະ ເຄື່ອນໄຫວອື່ນໆ ຕາມເຂດຊາຍແດນ

### ມາດຕາ 3

1. ບັນດາແມ່ນ້ຳທີ່ໄຫລຜ່ານຊາຍແດນ ຂອງສອງປະເທດ ໃນສັນຍາ ສະບັບນີ້ ຮ້ອງວ່າແມ່ນ້ຳຊາຍແດນ.

2. ການດຳເນີນການວັດແທກນ້ຳ ໃນແມ່ນ້ຳຊາຍແດນ, ການນຳໃຊ້ແມ່ນ້ຳຊາຍແດນ ແລະ ການເຄື່ອນໄຫວອື່ນໆ ທີ່ກ່ຽວຂ້ອງເຖິງລະບອບ ແມ່ນ້ຳຊາຍແດນ ທັງສອງຝ່າຍ ຈະຕ້ອງດຳເນີນການ ບົນຫລັກການສະເໝີພາບ ຕ່າງຝ່າຍຕ່າງໄດ້ຮັບ ຜົນ, ນັບຖືຜົນປະໂຫຍດຂອງກັນແລະກັນ ແລະ ພະຍາຍາມຫລີກລ້ຽງ ບໍ່ໃຫ້ກໍ່ ຄວາມເສັຍຫາຍ ໃຫ້ແກ່ອີກຝ່າຍນຶ່ງ. ຖ້າຫາກວ່າການກໍ່ສ້າງຫຼືການມ້າງເພຄັນຄູ, ປະຕູນ້ຳ ແລະກິດຈະການໄຟຟ້ານ້ຳຕົກອື່ນໆ ຕາມແມ່ນ້ຳຊາຍແດນ, ກໍ່ຄືການນຳໃຊ້ ແລະ ການປ່ຽນແປງນ້ຳໄຫຼແລະອື່ນໆ ໄດ້ ກໍ່ຄວາມເສັຍຫາຍໃຫ້ອີກຝ່າຍນຶ່ງ ທັງສອງຝ່າຍ ຈະປຶກສາຫາລືກັນ ເພື່ອແກ້ໄຂບົນຈິດໃຈສະເໝີພາບ, ອຳນວຍຄວາມສະດວກ ຊຶ່ງກັນແລະກັນ ແລະ ນັບຖືຜົນປະໂຫຍດຂອງກັນແລະກັນ.

3. ພົນລະເມືອງຂອງສອງຝ່າຍ ສາມາດຫາລ້ຽງຊີບ ຕາມເຂດ ແມ່ນ້ຳ ທີ່ໄດ້ກ່າວມາຂ້າງເທິງນັ້ນໂດຍ ອີງຕາມກົດຫມາຍ ແລະ ລະບຽບການ ຂອງປະເທດ ຕົນແຕ່ເດັດຂາດຕ້ອງຢູ່ໃນຂອບເຂດ ດິນແດນຂອງປະເທດຕົນ.

ຫ້າມການນຳໃຊ້ລະເບີດ ຫລືທຸກທາດເບື່ອ,ທາດເຄມີ,ຮາກໄມ້ທີ່ມີພິດ ແລະ ຢາມືນເມົາ ທີ່ອາດເປັນໄພອັນຕະລາຍ ຕໍ່ຊັບພະຍາກອນ ປະເພດປາໃນເຂດນ້ຳ ຊາຍແດນເພື່ອຫລີກລ້ຽງການ ເຮັດໃຫ້ເຂດນ້ຳ ຖືກເປິະເປື້ອນ ແລະ ການບົກແຫ້ງ ຂອງບໍ່ເກີດຂອງສາຍນ້ຳ.

## ມາດຕາ 4

ທັງສອງຝ່າຍຕ້ອງດຳເນີນມາດຕາການ ເພື່ອປົກປັກຮັກສາຄວາມສະອາດ, ການບໍ່ ໃຫ້ເກີດມີສິ່ງເປິະເປື້ອນຂອງສະພາບແວດລ້ອມ ເພື່ອການດຳລົງຊີວິດຕາມເຂດຊາຍແດນ. ຫ້າມເກັບມ້ຽນ ແລະ ແຜ່ກະຈາຍ ທຸກທາດເບື່ອ ຕາມເຂດໃກ້ໆເສັ້ນຊາຍແດນ ເພື່ອຫລີກເວັ້ນການເຮັດໃຫ້ທີ່ດິນ, ໃຕ້ດິນ ກໍ່ຄືອາກາດ ຖືກເປິະເປື້ອນ.

ຖ້າຫາກວ່າການເກັບມ້ຽນ ແລະ ແຜ່ກະຈາຍບັນດາທາດເບື່ອ ຫລືສິ່ງເປິະເປື້ອນ ໂດຍຝ່າຍນຶ່ງ ສ້າງຄວາມເສັຍຫາຍ ໃຫ້ອີກຝ່າຍນຶ່ງ, ທັງສອງຝ່າຍຈະຕ້ອງ ຮ່ວມກັນຕີລາຄາ ກ່ຽວກັບຄວາມເສັຍຫາຍ ດັ່ງກ່າວ ແລະ ຝ່າຍທີ່ໄດ້ກໍ່ຄວາມເສັຍຫາຍ ຈະຕ້ອງຮັບຜິດຊອບໃຊ້ແທນຄືນ ຜົນເສັຍຫາຍໃຫ້ອີກຝ່າຍນຶ່ງ.

## ມາດຕາ 5

ຫ້າມພົນລະເມືອງໃນເຂດຊາຍແດນ ຂອງເບື້ອງນຶ່ງຂ້າມຊາຍແດນ ໄປອີກເບື້ອງນຶ່ງ ເພື່ອໄປເຮັດໄຮ່, ເຮັດນາ, ເຮັດສວນ, ຕັດໄມ້, ລ່າເນື້ອ ແລະ ຂຸດຄົ້ນເຄື່ອງປ່າຂອງດົງ ຫລືການກະທຳອື່ນໆ ທີ່ມີຈຸດປະສົງຜິດກົດໝາຍ.ທັງສອງຝ່າຍຈະວາງ ມາດຕາການ ອັນຈຳເປັນ ເພື່ອປົກປັກຮັກສາ ສັດປ່າ ທີ່ມີຄ່າ ແລະ ຫ້າມນຳໃຊ້ ວິທີການໃດ ນຶ່ງທີ່ພາໃຫ້ສັດປ່າ ເຄື່ອນຍ້າຍ ຈາກຝ່າຍນຶ່ງ ໄປຢູ່ອີກຝ່າຍນຶ່ງ.

## ມາດຕາ 6

ຖ້າວ່າຝ່າຍນຶ່ງ ປະສົງ ຢາກດຳເນີນ ການຖ່າຍຮູບພາບ ສຳຫລວດສະພາບພື້ນທີ່ ຫລື ສຳຫລວດພູມີສາດ ແລະ ອື່ນໆ ດ້ວຍການໃຊ້ເຄື່ອງບິນ ຢູ່ໃກ້ ເຂດຊາຍແດນ ຈະຕ້ອງ ແຈ້ງໃຫ້ອີກຝ່າຍນຶ່ງ ຊາບລ່ວງໜ້າກ່ອນ ແລະ ຖ້າວ່າ ມີຄວາມຈຳເປັນ

ເຂົ້າໄປໃນດິນແດນ ຂອງອີກຝ່າຍນຶ່ງ ຈະຕ້ອງໄດ້ຮັບ ຄວາມເຫັນດີ ເຫັນພ້ອມຂອງຝ່າຍນັ້ນເສັຍກ່ອນ ໂດຍຜ່ານທາງການທູດ.

**ມາດຕາ 7**

ທັງສອງຝ່າຍ ຫ້າມທຸກການຝຶກແອບ ຊ້ອມລົບ ໃກ້ເສັ້ນຊາຍແດນ ໃນລັດສະໝີ ສອງພັນແມັດ (2.000 ແມັດ) ຫ່າງຈາກແຕ່ລະເບື້ອງ ຂອງ ເສັ້ນຊາຍແດນ.

ຫ້າມຍິງປືນ ຂ້າມຊາຍແດນ, ຖ້າຝ່າຍໃດນຶ່ງ ຕ້ອງການຈູດ ລະເບີດ ໃນຂອບເຂດຊາຍແດນ ຕ້ອງແຈ້ງຂ່າວໃຫ້ອີກຝ່າຍນຶ່ງ ຮູ້ກ່ອນ.

**ມາດຕາ 8**

ການສຳຫລວດ ແລະ ການຂຸດຄົ້ນບໍ່ແຮ່ ໃນຂອບເຂດ ຊາຍແດນ ໃຫ້ດຳເນີນ ຢູ່ເທິງດິນແດນຂອງຝ່າຍຕົນແລະ ຫ່າງຈາກເສັ້ນຊາຍແດນເບື້ອງລະນຶ່ງພັນແມັດ.

ຖ້າຫາກການສຳຫລວດ ແລະ ຂຸດຄົ້ນບໍ່ແຮ່ນັ້ນ ຫາກຕ່ຳກວ່າຂອບເຂດ ນຶ່ງພັນແມັດ ຕ້ອງມີການປຶກສາຫາລືກັນ ບົນພື້ນຖານ ໄດ້ຮັບຜົນປະໂຫຍດ ຮ່ວມ ກັນ ຫລື ບໍ່ໃຫ້ມີຜົນສະທ້ອນ ແກ່ອີກຝ່າຍນຶ່ງ.

**ມາດຕາ 9**

1. ແຕ່ລະຝ່າຍ ຕ້ອງຫ້າມ ການຖາງໄຮ່ ແລະ ຈູດປ່າ ໃນຂອບເຂດ ສອງພັນແມັດ (2.000 ແມັດ) ຫ່າງຈາກແຕ່ລະເບື້ອງ ຂອງ ເສັ້ນຊາຍແດນ.

2. ທັງສອງຝ່າຍ ຈະວາງມາດຕະການ ແລະ ຮ່ວມມືກັນ ໃນການປົກປັກ ຮັກສາປ່າໄມ້ ເພື່ອຫລີກເວັ້ນ ບໍ່ໃຫ້ໄຟໄໝ້ປ່າ ທີ່ອາດຈະເກີດຂຶ້ນ ຢູ່ຕາມເຂດ ຊາຍ ແດນ, ກໍ່ຄືກີດກັນບໍ່ໃຫ້ໄຟໄຫມ້ປ່າຕາມເຂດຊາຍແດນ ລາມອອກໄປຫາ ຊາຍແດນ ຂອງອີກຝ່າຍນຶ່ງ.

ຖ້າວ່າປ່າໄມ້ຖືກໄຟໄໝ້ ຕ້ອງດັບມອດຢ່າງທັນການ. ຖ້າສັງເກດ ເຫັນໄຟໄຫມ້ປ່າ ອາດຈະລາມອອກ ໄປຫາຊາຍແດນ ຂອງອີກຝ່າຍນຶ່ງ ຕ້ອງແຈ້ງຂ່າວ ໃຫ້ຝ່າຍນັ້ນ ໂດຍດ່ວນ ເພື່ອມີວິທີ ປ້ອງກັນທັນທີ. ຖ້າມີຄວາມຮຽກຮ້ອງ ຕ້ອງການ ຂອງຝ່າຍນຶ່ງແລ້ວ ອີກຝ່າຍນຶ່ງ ຕ້ອງຮີບ ຮ້ອນ ຊ່ວຍເຫລືອກັນມອດໄຟ ໃຫ້ທັນການ ສຸດຄວາມສາມາດ ຂອງຕົນ.

3. ຖ້າວ່າໄຟໄໝ້ປ່າລາມກາຍຊາຍແດນໄປ ອັນໄດ້ ສ້າງຄວາມເສັຍຫາຍ

ທາງດ້ານວັດຖຸ ໃຫ້ຝ່າຍນຶ່ງ. ທັງສອງຝ່າຍຈະຕ້ອງຕີລາຄາ ຜົນເສັຍຫາຍນັ້ນ ແລະ ຝ່າຍທີ່ເຮັດໃຫ້ເກີດຕົ້ນໄຟໄໝ້ ຈະຕ້ອງ ໃຫ້ການໄຊ້ແທນ ຕໍ່ຜົນເສັຍຫາຍ ແກ່ອີກ ຝ່າຍນຶ່ງ. ເວັ້ນເສັຍແຕ່ໃນກໍລະນີ ທີ່ມີການຢັ້ງຢືນ ຈະແຈ້ງ ວ່າ ໄຟໄໝ້ນັ້ນໄດ້ເກີດຂຶ້ນດ້ວຍເຫດຜົນ ພາວະວິໄສ.

4. ທັງສອງຝ່າຍ ຈະຕ້ອງວາງມາດຕະການ ເພື່ອປ້ອງກັນ ການລະບາດ ຂອງພະຍາດຕິດແປດ ທີ່ມາຈາກຄົນ,ສັດແລະມາຈາກພືດພັນ ເພື່ອບໍ່ໃຫ້ແຜ່ລາມກາຍຊາຍແດນ. ແຕ່ລະຝ່າຍຕ້ອງແຈ້ງ ໃຫ້ກັນຊາບເທົ່າທີ່ຝ່າຍຕົນ ໄດ້ສັງເກດພົບເຫັນປະກົດການ ຂອງພະຍາດຕິດແປດ ດັ່ງກ່າວ. ທັງສອງຝ່າຍ ສາມາດເຮັດສັນຍາ ໃນກໍລະ ນີຈຳເປັນ ເພື່ອຮ່ວມກັນແກ້ໄຂ ກ່ຽວກັບການປ້ອງກັນ ການລະບາດ ຂອງພະຍາດຕິດແປດທີ່ມາຈາກຄົນ, ສັດ ແລະ ມາຈາກພືດພັນຕ່າງໆ.

## <u>ພາກທີສາມ</u>

## ວ່າດ້ວຍລະບຽບການຜ່ານແດນ, ການພົວພັນແລກປ່ຽນຢ້ຽມຢາມ ແລະການປ້ອງກັນ ຄວາມສະຫງົບໃນເຂດຊາຍແດນ

### <u>ມາດຕາ 10</u>

1. ເພື່ອສົ່ງເສີມການພົວພັນມິດຕະພາບ ແລະ ການຄ້າຂາຍທີ່ຖືກກົດໝາຍລະຫວ່າງພົນລະເມືອງຕາມເຂດຊາຍແດນ ຂອງສອງປະເທດ ທັງສອງ ຝ່າຍອະນຸ ຍາດໃຫ້ ພົນລະເມືອງຊາຍແດນຂ້າມໄປມາຫາສູ່ກັນ ເພື່ອແລກປ່ຽນ ຄ້າຂາຍ, ຢ້ຽມຢາມພີ່ນ້ອງ, ອອກປະເທດ ໄປປິ່ນປົວພະຍາດ, ໄປຮ່ວມ ງານບຸນ ປະເພ ນີຕ່າງໆ.

ຄຳສັບພົນລະເມືອງຊາຍແດນ ໃນສັນຍາສະບັບນີ້ ແມ່ນໝາຍເຖິງ ພົນລະເມືອງ ລາວແລະຈີນ ຂອງບັນດາຕາແສງທີ່ຢູ່ຕິດກັບຊາຍແດນຂອງແຕ່ລະປະເທດ.

2. ໃນການຂ້າມຊາຍແດນ ຂອງພົນລະເມືອງຊາຍແດນ ແລະພະນັກງານທີ່ດຳເນີນການຄ້າຊາຍແດນ ຂອງແຕ່ລະຝ່າຍ ຕ້ອງມີໃບອະນຸຍາດຜ່ານແດນ ເຮັດຖືກຕ້ອງ ຕາມລະບຽບການ ອອກໃຫ້ໂດຍອົງການ ທີ່ໄດ້ຮັບສິດອຳນາດ ຂອງປະເທດຕົນ. ການຂ້າມຜ່ານ ຊາຍແດນຈະເປັນໄປຕາມ ຈຸດຜ່ານແດນ (ເຂົ້າ-ອອກ ) ທີ່ສອງຝ່າຍໄດ້

ກຳນົດໄວ້.

ໃບຜ່ານແດນ ຈະຕ້ອງບອກເຫດຜົນການໄປ ແລະບ່ອນຈະໄປເຖິງ, ກຳນົດເວລາ ແລະບ່ອນພັກເຊົາ. ໃບຜ່ານແດນໃຊ້ສະເພາະແຕ່ ພົນລະເມືອງຊາຍແດນ ຂອງສອງຝ່າຍ ແລະ ພະນັກງານທີ່ດຳເນີນ ການຄ້າຂາຍ ຕາມ ຊາຍແດນ ທີ່ນຳໃຊ້ໃນ ເວລາເຄື່ອນໄຫວ ຕາມ ເຂດຊາຍແດນ ທີ່ໄດ້ກຳນົດໄວ້ເທົ່ານັ້ນ.

ສຳລັບບຸກຄົນທີ່ອາຍຸບໍ່ເຖິງ 15 ປີ ອະນຸຍາດໃຫ້ຂ້າມຊາຍແດນໄດ້ ໃນຖານະເປັນຜູ້ຕິດຕາມກັບຜູ້ມີໃບຜ່ານແດນ, ແຕ່ໃບຜ່ານແດນຕ້ອງແຈ້ງຈຳນວນຜູ້ຕິດ ຕາມ.

3. ກ່ຽວກັບຮູບແບບໃບຜ່ານແດນນັ້ນ ໃຫ້ອົງການທີ່ໄດ້ຮັບການມອບໝາຍຂອງແຕ່ລະຝ່າຍ ເຮັດຂຶ້ນ ແຕ່ຕ້ອງເຮັດເປັນສອງພາສາ, ພາສາລາວ, ພາສາຈີນ ແລະຕ້ອງແຈ້ງຮູບແບບດັ່ງກ່າວ ໃຫ້ກັນຊາບກ່ອນ ຈະອອກ ນຳໃຊ້.

4. ພົນລະເມືອງຊາຍແດນ ເມື່ອຂ້າມຜ່ານຊາຍແດນ ໄປອີກຝ່າຍນຶ່ງຕ້ອງເຄົາລົບນັບຖືກົດໝາຍ ຂອງຝ່າຍນັ້ນ ແລະ ບັນດາຂໍ້ກຳນົດ ທີ່ສອງຝ່າຍ ໄດ້ຕົກລົງ ນຳ ກັນ. ທັງສອງຝ່າຍ ໃຫ້ການປົກປັກຮັກສາ ສິດທິ ແລະ ຜົນປະໂຫຍດ ອັນຊອບທຳແກ່ພົນລະເມືອງຊາຍແດນ ຂອງອີກຝ່າຍນຶ່ງ.

5. ທັງສອງຝ່າຍ ຈະໄດ້ກຳນົດປະເພດ, ມູນຄ່າ, ຈຳນວນສິນຄ້າ ແລະ ເງິນຕາທີ່ພົນລະເມືອງຊາຍແດນ ຂອງແຕ່ລະຝ່າຍຈະຖືຕິດຕົວ ຂ້າມຜ່ານຊາຍແດນ ເພື່ອຊື້ຂາຍ, ແລກປ່ຽນ, ເປັນ ຂອງຝາກຂອງຕ້ອນ ພີ່ນ້ອງເພື່ອນມິດ ອີງຕາມກົດ ລະບຽບພາສີ ຂອງແຕ່ລະຝ່າຍ.

## <u>ມາດຕາ 11</u>

1. ດ້ວຍຈຸດປະສົງ ສ້າງຄວາມສະດວກໃນ ການກວດກາຄົນໄປມາຜ່ານຊາຍແດນ ລະຫວ່າງສອງປະເທດ, ທັງສອງຝ່າຍຕົກລົງໄຂຈຸດເຂົ້າ-ອອກ ທາງບົກ(ດ່ານຊາຍແດນ) ດັ່ງລຸ່ມນີ້:

| <u>ຊື່ດ່ານຝ່າຍລາວ</u> | <u>ຊື່ດ່ານຝ່າຍຈີນ</u> |
|---|---|
| - ປາງຖາ | - ມານຈອງ |
| - ບໍ່ເຕັນ | - ບໍ່ຫານ (ຊາງຢົງ) |
| - ປາງໄຮ່ | - ເມືອງມານ |

- ລາມຕູຍ - ເມືອງຄັງ

2. ຢູ່ບ່ອນທາງໄກປະຕູດ່ານ ທີ່ບົ່ງໄວ້ໃນວັກ 1 ຂອງມາດຕານີ້ ຖ້າຫາກ ວ່າ ເຫັນຈຳເປັນ ອຳນາດການປົກຄອງ ຂັ້ນແຂວງ ຂອງສອງຝ່າຍ ຕາມເຂດຊາຍແດນ ອາດ ຈະຕົກລົງ ເປີດປະຕູດ່ານສຳຮອງຊົ່ວຄາວ. ພາຍຫຼັງທີ່ໄດ້ເປັນເອກະພາບກັນ ແລ້ວ ອຳ ນາດການປົກຄອງ ຂັ້ນແຂວງ ຂອງສອງຝ່າຍ ຕ້ອງ ລາຍງານລັດຖະບານ ຂອງຕົນເພື່ອ ຂໍ ອະນຸມັດ ແລະ ປະຕິບັດ.

ການກວດກາການໄປມາ ຜ່ານຂ້າມຊາຍແດນ ຢູ່ປະຕູດ່ານສຳຮອງ ຕ້ອງປະຕິ ບັດຕາມຫລັກການ ຂອງການກວດກາທົ່ວໄປ ໃຫ້ຄືກັນກັບ ດ່ານຊາຍແດນ ທາງການ.

## ມາດຕາ 12

1. ໃນເມື່ອມີຄົນ ຫລື ສັດຂອງຝ່າຍໃດນຶ່ງ ໃນເຂດຊາຍແດນ ເກີດພະຍາດ ຕິດແປດ ອຳນາດການປົກຄອງທ້ອງຖິ່ນ ຂອງຝ່າຍນັ້ນ ຕ້ອງມີວິທີປ້ອງກັນ ຢ່າງທັນການ ພ້ອມກັນນັ້ນ ຕ້ອງແຈ້ງຂ່າວ ໃຫ້ອີກຝ່າຍນຶ່ງຊາບ ຕ້ອງຢຸດຕິ ການສັນ ຈອນໄປມາ ແລະ ແລກປ່ຽນຊື້ຂາຍ ຜ່ານຊາຍແດນ ຊົ່ວຄາວ, ຖ້າເຫັນວ່າ ມີຄວາມຮຽກຮ້ອງ ຕ້ອງການ ຄວາມຊ່ວຍ ເຫລືອ ຈາກຝ່າຍນຶ່ງ ອີກ ຝ່າຍນຶ່ງຈະຕ້ອງຊ່ວຍເຫລືອ ໂດຍທັນທີ ແລະ ສຸດ ຄວາມສາມາດ ຂອງຕົນ.

2. ການຢຸດຕິການສັນຈອນ, ຊື້ຂາຍ ແລະ ຍົກຍ້າຍສັດຂ້າມຊາຍແດນ ຊົ່ວ ຄາວ ໃນຂອບ ເຂດຕາແສງຊາຍແດນໃດນຶ່ງນັ້ນ ແມ່ນອຳນາດການປົກຄອງ ຂອງ ທ້ອງ ຖິ່ນນັ້ນ ເປັນ ຜູ້ຕົກລົງ ແລະ ລາຍງານໂດຍດ່ວນ ຂຶ້ນຂັ້ນເທິງຂອງຕົນ. ສ່ວນການປິດ ແລະ ການ ເປີດ ບັນດາປະຕູດ່ານອອກ-ເຂົ້າ ທີ່ສຳຄັນແມ່ນລັດຖະບານ ແຕ່ລະຝ່າຍ ເປັນຜູ້ ຕົກລົງ ແລະ ແຈ້ງການໃຫ້ອີກ ຝ່າຍນຶ່ງຊາບນຳ.

3. ໃນກໍລະນີມີຄົນເຈັບ ຫລື ອຸປະຕິເຫດຈະຕ້ອງ ໄດ້ປິ່ນປົວສຸກເສີນ, ພົນ ລະເມືອງຊາຍແດນ ຂອງອີກຝ່າຍນຶ່ງ ສາມາດຕິດຕໍ່ພົວພັນໂດຍກົງ ກັບພື້ນຖານສາທາ ລະນະສຸກ ທີ່ຢູ່ມໍ່ ຂອງອີກຝ່າຍນຶ່ງໄດ້ ເພື່ອຂໍຄວາມຊ່ວຍເຫລືອ ປິ່ນປົວ, ພ້ອມ ກັນນັ້ນ ກໍ່ຕ້ອງແຈ້ງຂ່າວ ໃຫ້ອຳນາດການປົກຄອງຂອງຕົນຮູ້ ເພື່ອ ພົວພັນເຮັດໜັງ ສື ທີ່ຈຳເປັນ.

4. ໃນກໍລະນີສັດລ້ຽງຂອງພົນລະເມືອງຊາຍແແດນ ຂອງຝ່າຍໃດນຶ່ງ ຂ້າມ ໄປທຳລາຍພົນລະປູກ ຂອງອີກຝ່າຍນຶ່ງ, ຜູ້ເປັນເຈົ້າຂອງສັດ ຕ້ອງໃຊ້ແທນ ຢ່າງເໝາະ

ສົມ ຕາມການຕົກລົງ ທີ່ສົມເຫດສົມຜົນ ລະຫວ່າງສອງກໍ້າ ສອງຝ່າຍ.

ໃນເມື່ອສັດລ້ຽງ ຂອງພົນລະເມືອງຊາຍແດນ ຝ່າຍນຶ່ງຫາກຂ້າມໄປເບື້ອງຂອງອີກຝ່າຍນຶ່ງ, ເຈົ້າໜ້າທີ່ ແລະ ປະຊາຊົນ ຂອງຝ່າຍນັ້ນ ຕ້ອງຮັກສາ ຊ່ວຍເຫລືອເບິ່ງແຍງລ້ຽງດູ ແລະ ຕ້ອງແຈ້ງຂ່າວ ໃຫ້ເຈົ້າໜ້າ ທີ່ ຝ່າຍກ່ຽວຂ້ອງ ພ້ອມທັງ ຜູ້ເປັນ ເຈົ້າຂອງສັດຊາບ ເພື່ອມາຮັບເອົາ, ເຈົ້າຂອງສັດຕ້ອງຈ່າຍຄ່າແຮງງານເບິ່ງແຍງລ້ຽງດູສັດຕາມທີ່ເໝາະສົມ.

ໃນເວລາສັດ ຢູ່ໃນການຄຸ້ມຄອງ ຂອງຕົນຫ້າມໃຊ້ວຽກ ຫລື ທຸບຕີ ທໍລະມານໃຫ້ຖືກບາດເຈັບ ຫລື ຕາຍ ຖ້າສັດເຈັບຫລືຕາຍ ຍ້ອນເຈດຕະນາທຳລາຍ ຜູ້ຮັກສາສັດຕ້ອງໃຊ້ແທນຢ່າງເໝາະສົມ.

5. ຖ້າພວກກ່ຽວ ບໍ່ສາມາດແກ້ໄຂ ດ້ວຍຕົນເອງໄດ້ນັ້ນອຳນາດ ການປົກຄອງທ້ອງຖິ່ນ ຂອງສອງຝ່າຍ ຕ້ອງແກ້ໄຂ ຊ່ວຍເຂົາເຈົ້າ ບົນຈິດໃຈມິດຕະພາບ ຖາມ ບ້ານໃກ້ເຮືອນຄຽງ ແລະ ເຂົ້າໃຈກັນ.

## ມາດຕາ 13

1. ສິນຄ້າ ແລະ ພາຫະນະຂົນສົ່ງ ທຸກປະເພດ ທີ່ສົ່ງອອກ-ເຂົ້າ ແລກປ່ຽນຊື້ຂາຍ ລ້ວນແຕ່ມີໜັງສືອະນຸຍາດ ທີ່ອອກໂດຍ ອົງການທີ່ມີສິດອຳນາດ ຂອງທ້ອງຖິ່ນ ແລະ ຕ້ອງປະຕິບັດ ໃຫ້ຖືກ ຕາມຂໍ້ກຳນົດ ກ່ຽວກັບລະບຽບ ພາສີ, ອະນາໄມສາກົນ ແລະ ກົດໝາຍທີ່ກ່ຽວຂ້ອງ ຂອງແຕ່ລະຝ່າຍ.

2. ຄົນ, ເຄື່ອງຂອງ, ສິນຄ້າ, ພາຫະນະຂົນສົ່ງ ສາມາດຂ້າມຊາຍແດນ ໄປມາໄດ້ ໃນເມື່ອມີໜັງສືຄົບຖ້ວນ ຖືກຕ້ອງຕາມທຳນຽມ, ດັ່ງກ່າວໄວ້ ໃນຂໍ້ 1 ຂອງມາດຕານີ້ ແລະ ຕ້ອງຜ່ານໃຫ້ຖືກຕາມປະຕູດ່ານ ຊາຍແດນ ທີ່ສອງຝ່າຍ ໄດ້ ກຳນົດໄວ້.

3. ກ່ຽວກັບການຍົກເວັ້ນ ການກວດກາ ໃນກໍລະນີພິເສດ; ສອງຝ່າຍ ຈະປຶກສາຫາລືກັນ ເປັນແຕ່ລະເທື່ອໄປ.

## ມາດຕາ 14

1. ໃນກໍລະນີທີ່ພົນລະເມືອງຊາຍແດນ ຂອງຝ່າຍໃດນຶ່ງ ຫາກຍົກຍ້າຍ ລັກລ້າມຊາຍແດນ ໄປຢູ່ອີກເບື້ອງນຶ່ງ, ພາຍຫລັງ ທີ່ໄດ້ສືບ ສວນ ແລະ ໃຊ້ມາດຕະການອັນຈຳເປັນຕາມ ລະບຽບກົດໝາຍແລ້ວ, ຕ້ອງແຈ້ງການໃຫ້ອີກຝ່າຍນຶ່ງຊາບ ເພື່ອຮ່ວມ

ກັນແກ້ໄຂ ໂດຍແມ່ນເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງສອງຝ່າຍ ປຶກສາຫາລືກັນເພື່ອດຳເນີນ
ການມອບ-ຮັບ ພວກດັ່ງກ່າວ ແລະ ລາຍງານໃຫ້ ຂັ້ນເທິງ ຂອງຕົນ ຊາບນຳ.

໒. ການມອບ-ຮັບ ພວກຂ້າມຊາຍແດນ ທີ່ໄດ້ບົ່ງໄວ້ໃນຂໍ້ ໑ ຂອງ ມາດຕານີ້
ຈະຕ້ອງໄດ້ເຮັດ ບົດບັນທຶກ ເຊັນນຳກັນຄັກແນ່ແລະ ຕ້ອງດຳເນີນຢູ່ຕາມປະຕູດ່ານຊາຍ
ແດນໃດນຶ່ງ ທີ່ຢູ່ໃກ້.

໓. ໃນເມື່ອ ຝ່າຍໃດນຶ່ງ ຫາກພົບເຫັນຊາກສົບຄົນຕາຍ ຢູ່ໃນເຂດຊາຍແດນ. ຖ້າບໍ່
ຮູ້ແຈ້ງວ່າ ຊາກສົບນັ້ນ ເປັນຄົນຂອງຝ່າຍໃດ.ຝ່າຍພົບເຫັນກ່ອນ ຕ້ອງແຈ້ງຂ່າວໃຫ້ອີກ
ຝ່າຍນຶ່ງ ຊາບໂດຍດ່ວນ ເພື່ອພ້ອມກັນສັນລະສູດ. ພາຍຫຼັງ ໔໘ ຊົ່ວໂມງຫຼັງຈາກການ
ແຈ້ງຂ່າວແລ້ວ ຖ້າຝ່າຍນັ້ນຫາກບໍ່ມາ, ຝ່າຍພົບເຫັນ ຕ້ອງມ້ຽນມັດ ແລະ ເຮັດເອກະ
ສານ ຈຳເປັນກ່ຽວກັບການມ້ຽນມັດສົບ ນັ້ນໄວ້.

<u>**ມາດຕາ 15**</u>

1. ທັງສອງຝ່າຍຈະຮ່ວມມືກັນໃນການປົກປັກຮັກສາຄວາມສະຫງົບສຸກຕາມ
ເຂດຊາຍແດນ ລະຫວ່າງສອງປະເທດ.

ໃນເມື່ອຝ່າຍໃດນຶ່ງ ໄດ້ພົບເຫັນການ ເຄື່ອນໄຫວຂອງພວກທີ່ກະທຳຜິດກົດ
ໝາຍຕາມເຂດຊາຍແດນຕ້ອງສົ່ງຂ່າວ ໃຫ້ອີກຝ່າຍນຶ່ງ ຊາບທັນທີແລະ ໃນເມື່ອຈຳເປັນ
ອາດສົມທົບກັນ ເພື່ອຈັບຕົວ ແລະ ຖ້າແມ່ນຄົນຂອງຝ່າຍໃດ ຕ້ອງນຳສົ່ງໃຫ້ຝ່າຍນັ້ນ.

໒. ແຕ່ລະຝ່າຍ ຕ້ອງໃຊ້ມາດຕະການ ອັນເໝາະສົມ ຕາມກົດໝາຍຂອງ ຝ່າຍ
ຕົນ ຕໍ່ບຸກຄົນທີ່ມີການກະທຳລະເມີດກົດລະບຽບຊາຍແດນ.ຖ້າແມ່ນພົນລະເມືອງຂອງ
ຝ່າຍໃດຕ້ອງສົ່ງໃຫ້ຝ່າຍນັ້ນແກ້ໄຂ. ກ່ອນນຳສົ່ງຕ້ອງແຈ້ງຊື່,ຮູບ,ທີ່ຢູ່ລະອຽດຂອງຜູ້ກ່ຽວ.
ພາຍຫລັງທີ່ສອງຝ່າຍ ໄດ້ເຫັນດີນຳກັນ ແລ້ວກຳນົດເວລານຳສົ່ງ. ສ່ວນຫລັກຖານ ທີ່
ກ່ຽວຂ້ອງ ແລະຂອງກາງທັງໝົດ ຖ້າເປັນຂອງ ຝ່າຍໃດ ຈະຕ້ອງ ນຳສົ່ງໃຫ້ ຝ່າຍນັ້ນ.ພົນ
ລະເມືອງຂອງປະເທດທີ່ ໓ ແມ່ນ ບໍ່ຢູ່ໃນ ປະເພດທີ່ ຈະຕ້ອງ ນຳສົ່ງ.

## ພາກທີສີ່

## ວ່າດ້ວຍຕະຫລາດແລກປ່ຽນສິນຄ້າ ລະຫວ່າງ ພົນລະເມືອງຊາຍແດນດ້ວຍມູນຄ່ານ້ອຍແລະ ການແລກປ່ຽນການຄ້າ ລະຫວ່າງອົງການຄ້າ ຂອງທ້ອງຖິ່ນ ຢູ່ເຂດຊາຍແດນ.

### ມາດຕາ 16

1. ດ້ວຍຈຸດປະສົງ ເພື່ອສົ່ງເສີມການຂະຫຍາຍເສດຖະກິດ ຢູ່ເຂດຊາຍ ແດນ ຂອງສອງປະເທດ, ສາງຄວາມສະດວກ ໃນການແລກປ່ຽນອຸປະກອນການຜະລິດ ແລະ ສິນຄ້າທີ່ຈຳເປັນ ລະຫວ່າງພົນລະເມືອງຊາຍແດນ ຂອງສອງປະເທດ,ທັງສອງຝ່າຍເຫັນພ້ອມນຳກັນ ໃຫ້ອົງການຄ້າ ໃນຂັ້ນແຂວງ ຫລື ຂັ້ນເມືອງຊາຍແດນ ຂອງ ສອງປະເທດ ດຳເນີນການແລກປ່ຽນ ການຄ້າທ້ອງຖິ່ນ ຕາມເຂດຊາຍ ແດນນຳກັນ.

2. ສຳລັບຈຸດແລກປ່ຽນການຄ້າ ຊາຍແດນ (ຕະລາດຊາຍແດນ) ທັງສອງຝ່າຍເຫັນດີໃຫ້ໄຂຈຸດແລກປ່ຽນ ສິນຄ້າ ທີ່ເຫມາະສົມ ຕາມປະຕູດ່ານຊາຍ ແດນ ທີ່ບົ່ງໄວ້ໃນມາດຕາ 11 . ຖ້າເຫັນມີຄວາມຈຳເປັນຈະເພີ່ມຂື້ນຫລືປ່ຽນແປງແມ່ນອຳນາດການປົກຄອງ ທ້ອງຖິ່ນທັງສອງຝ່າຍ ຈະປຶກສາຫາລືແລະຕົກລົງກັນທີຫລັງ.

### ມາດຕາ 17

1. ອີງຕາມຄວາມຕ້ອງການ ແລະ ຄວາມສາມາດໃນ ການແລກ ປ່ຽນ ການ ຄ້າທ້ອງຖິ່ນລະຫວ່າງ ຊາຍແດນສອງປະເທດຈະດຳເນີນການ ແບບແລກ ປ່ຽນວັດຖຸພັນ. ເຈົ້າໜ້າທີ່ ອົງການປົກຄອງຂັ້ນແຂວງ ເຂດຊາຍແດນ ຂອງສອງປະເທດຈະຕົກລົງກັນຜ່ານການປຶກສາຫາລື ກ່ຽວກັບວິທີການລະອຽດ ໃນການແລກ ປ່ຽນການຄ້າ ທ້ອງຖິ່ນດັ່ງກ່າວ.

2. ກ່ຽວກັບຕະລາດການຄ້າ ລະຫວ່າງ ພົນລະເມືອງຊາຍແດນທີ່ເຮັດການຄ້າມີມູນຄ່າບໍ່ຫລວງຫລາຍ ຢູ່ເຂດຊາຍແດນ ແລະ ການແລກປ່ຽນ ການຄ້າທ້ອງຖິ່ນ ລະຫວ່າງ ສອງປະເທດນັ້ນ ຫ້າມເດັດຂາດ ບໍ່ໃຫ້ນຳ ເອົາເງິນຕາຂອງປະເທດຕົນອອກຈາກ ດິນ ແດນ ຂອງປະເທດຕົນ ແລະ ນຳເອົາເງິນ ຕາຂອງປະເທດນຶ່ງ ເຂົ້າໄປໃນປະເທດນຶ່ງ ເວັ້ນເສຍ ແຕ່ກໍລະນີ ມີຄຳຕົກລົງ ຂອງ ລັດຖະບານ ທັງສອງ ປະເທດ. ໃນເວລາດຽວກັນນີ້

ການສັນຈອນເງິນຕາ ຂອງອີກຝ່າຍນຶ່ງ ແມ່ນຖືກຫ້າມ ຢ່າງເດັດຂາດ ຢູ່ຕະຫລາດ ຂອງ ອີກຝ່າຍນຶ່ງ.

## ມາດຕາ 18

1. ແຕ່ລະຝ່າຍອາດຈະເກັບ ພາສີອາກອນ ຫຼື ເກັບ ຜ່ອນຜັນ, ແລະ ລົບລ້າງການເກັບພາສີ ຫລື ອາກອນຕໍ່ສິນຄ້າ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຕ່າງໆ ຂອງປະເທດຕົນ ໃນທຸກໆການສັນຈອນ ການຄ້າພາຍໃຕ້ຮູບການຕ່າງໆ ທີ່ໄດ້ກຳນົດໄວ້ ໃນສັນຍາ ສະບັບນີ້.

2. ໃນທຸກຮູບການແບບການຄ້າ ທີ່ໄດ້ກຳນົດໄວ້ ໃນສັນຍາສະບັບນີ້, ທັງສອງ ຝ່າຍຈະປະຕິບັດຕາມກົດໝາຍ ແລະລະບຽບການຂາເຂົ້າ-ຂາອອກຂອງປະເທດຕົນ, ເກືອດຫ້າມສິນຄ້າທີ່ຖືກຫ້າມຜ່ານແດນ ແລະ ເກືອດຫ້າມການຄ້າ ເຖື່ອນ.

## ມາດຕາ 19

ເພື່ອອຳນວຍຄວາມສະດວກ ໃຫ້ແກ່ພົນລະເມືອງ ຊາຍແດນ ຂອງສອງຝ່າຍ ໃນການແລກປ່ຽນ ຊື້ຂາຍ ຕາມຈຸດແລກປ່ຽນ (ຕາມຕະລາດຊາຍແດນ) ຖ້າມີເງື່ອນໄຂທັງສອງຝ່າຍ ຈະຈັດຕັ້ງ ໜ່ວຍແລກປ່ຽນເງິນຕາ ຢູ່ຈຸດຜ່ານແດນ ຫລືຢູ່ຈຸດຕະລາດຊາຍແດນ ຂອງແຕ່ລະຝ່າຍ ສຳລັບອັດຕາແລກປ່ຽນເງິນຕານັ້ນ ພາກສ່ວນກ່ຽວຂ້ອງຈະປຶກສາ ຫາລື ແລະ ຕົກລົງກັນຕາມຫລັງ.

## ມາດຕາ 20

ທຸກການບໍ່ລົງລອຍກັນ ທີ່ອາດຈະເກີດຂື້ນໃນການ ສັນຈອນ ທາງດ້ານການຄ້າພາຍໃຕ້ຮູບການຕ່າງໆ ທີ່ໄດ້ກຳນົດໝາຍ ໂດຍສັນຍາສະບັບນີ້ ຈະຕ້ອງໄດ້ຮັບການແກ້ໃຂ ໂດຍຜູ້ຄົນທີ່ກ່ຽວຂ້ອງ ຂອງສອງຝ່າຍ ດ້ວຍວິທີການປຶກສາຫາລື ແບບມິດຕະພາບ.

ໃນກໍລະນີ ບໍ່ອາດແກ້ໃຂກັນໄດ້ ດ້ວຍຜູ້ຄົນທີ່ກ່ຽວຂ້ອງນັ້ນ ອາດຈະໄດ້ຮັບການແກ້ໃຂ ໂດຍຜ່ານການປຶກສາຫາລື ລະຫວ່າງ ເຈົ້າໜ້າທີ່ຂອງ ອົງການປົກຄອງ ຂັ້ນເມືອງ ຂັ້ນແຂວງ, ຢູ່ເຂດຊາຍແດນ ຂອງສອງຝ່າຍ.

## ພາກທີ່ ຫ້າ
## ວ່າດ້ວຍລະບຽບຕິດຕໍ່ພົວພັນຕາມເຂດຊາຍແດນ

### ມາດຕາ 21

ເພື່ອເພີ່ມທະວີການຄຸ້ມຄອງເຂດຊາຍແດນລະຫວ່າງສອງປະເທດ,ອຳນວຍຄວາມສະດວກໃຫ້ແກ່ ອຳນາດ ການປົກຄອງ ທ້ອງຖິ່ນຕາມເຂດຊາຍແດນ, ສອງຝ່າຍຕົກລົງສ້າງສາຍການຕິດຕໍ່ພົວພັນກັນກັບຂັ້ນ ທີ່ເທົ່າທຽມກັນ.

1. ອຳນາດການປົກຄອງທ້ອງຖິ່ນຂອງສອງຝ່າຍ ດຳເນີນການຕິດຕໍ່ພົວພັນໃນຂັ້ນທີ່ເທົ່າທຽມກັນ ຄືດັ່ງລຸ່ມນີ້:

ຝ່າຍລາວ ມີແຂວງຜົ້ງສາລີ, ອຸດົມໄຊ ແລະຫລວງນ້ຳທາ; ຝ່າຍຈີນ ມີແຂວງຢູນານ.

ຝ່າຍລາວມີເມືອງຍອດອູ; ຝ່າຍຈີນມີເມືອງ ຈຽງເຊີງ

ຝ່າຍລາວມີເມືອງຍອດອູ, ບຸນໄຊ, ນາໝໍ້, ນ້ຳທາ ແລະ ເມືອງສິງ; ຝ່າຍຈີນມີເມືອງຫລ້າ.

2. ອຳນາດການປົກຄອງທ້ອງຖິ່ນຂອງສອງຝ່າຍ ຈະຮັບຜິດຊອບແກ້ໄຂ ແລະປະຕິບັດບັນດາວຽກງານສຳຄັນ ທີ່ກ່ຽວຂ້ອງກັບສັນຍາສະບັບນີ້ ດັ່ງລຸ່ມນີ້:

ກ. ບັນດາວຽກງານທີ່ໄດ້ຮັບການມອບໝາຍ ຈາກລັດຖະບານສູນກາງ.

ຂ. ດຳເນີນການຄຸ້ມຄອງ, ກວດກາ ແລະປົກປັກຮັກສາເສັ້ນຊາຍແດນ ແລະຫລັກໝາຍຊາຍແດນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ.

ຄ. ບັນຫາ ການພົວພັນ ແລະ ໄປມາຫາສູ່ ລະຫວ່າງ ພົນລະເມືອງ ຕາມເຂດ ຊາຍແດນ (ລວມທັງການ ດຳເນີນການຜະລິດ ແລະ ການເຄື່ອນໄຫວດ້ານການຄ້າ, ການຮ່ວມດອງ, ຮ່ວມງານບຸນ ປະເພນີ ຕ່າງໆ ແລະການຄຸ້ມຄອງ ການໄປມາປະຈຳວັນ ແລະ ອື່ນໆ ).

ງ. ບັນຫາ ເພື່ອປ້ອງກັນຄວາມສະຫງົບສຸກ ຕາມເຂດຊາຍແດນ (ລວມ ທັງການສົມທົບ ແລະ ການຮ່ວມມືກັນ ໃນການຄຸ້ມຄອງ ເພື່ອປ້ອງກັນຄວາມສະຫງົບສຸກ, ການປາບການຄ້າຂອງເຖື່ອນ ແລະ ການຄ້າຢາເສບຕິດ

ແລະ ອື່ນໆ).

ຈ. ບັນດາວຽກງານອື່ນໆທີ່ຈຳເປັນ ຕ້ອງແມ່ນອຳນາດການປົກຄອງທ້ອງຖິ່ນຂອງສອງຝ່າຍເປັນຜູ້ແກ້ໄຂ.

3. ການຕິດຕໍ່ພົວພັນ ລະຫວ່າງອຳນາດການປົກຄອງທ້ອງຖິ່ນ ຂອງສອງ ຝ່າຍ ແມ່ນດຳເນີນດ້ວຍຮູບແບບ ການປຶກສາຫາລືກັນ, ບັນຫາ ຂອງການປຶກສາ ຫາລື, ເວລາ ແລະ ສະ ຖານທີ່ ຂອງການປຶກສາຫາລືກັນ ຈະຕ້ອງຕິດຕໍ່ກັນອີກ ເພື່ອກຳນົດໃຫ້ແຈ້ງລ່ວງໜ້າ ໂດຍຜ່ານອົງການປ້ອງກັນຊາຍແດນ ໃນດ່ານຜ່ານແດນ ຂອງ ສອງຝ່າຍ. ສະ ຖານທີ່ການປຶກສາຫາລືນັ້ນ ຈະຕ້ອງເອົາຢູ່ດ່ານ ເຂົ້າ-ອອກຊາຍແດນ (ດ່ານຜ່ານແດນ ) ທີ່ຢູ່ມໍ່ນັ້ນ ຫລືຕົວເມືອງ.

4. ການພົບປະຫາລືແຕ່ລະຄັ້ງ ຕ່າງຝ່າຍຕ່າງບັນທຶກ. ບັນດາບັນຫາ ທີ່ສຳຄັນທີ່ໄດ້ຕົກລົງເຫັນດີນຳກັນ ຈະຕ້ອງໄດ້ເຮັດບົດບັນທຶກຮ່ວມກັນ, ເຮັດເປັນສອງສະບັບຕົ້ນ ທີ່ຂຽນດ້ວຍ ພາສາລາວ ແລະ ພາສາຈີນ ທີ່ລົງນາມດ້ວຍຜູ້ຕາງໜ້າ ຂອງສອງຝ່າຍ, ແລ້ວລາຍງານ ໃຫ້ຂັ້ນເທິງ ຂອງຕົນຊາບ.

## ມາດຕາ 22

ເພື່ອແກ້ໄຂວຽກງານປະຈຳວັນຕາມຊາຍແດນ ໃຫ້ທັນການ, ທັງສອງຝ່າຍຈັດຕັ້ງລະບົບການພົບປະຫາລືກັນ ລະຫວ່າງຜູ້ຕາງໜ້າ, ຮອງຜູ້ຕາງໜ້າ ແລະ ເຈົ້າໜ້າທີ່ຕິດຕໍ່ພົວພັນ ຂອງອົງການປ້ອງກັນຊາຍແດນ ຂອງສອງຝ່າຍ. ຜູ້ຕາງໜ້າ ແລະ ຜູ້ຮອງຂອງອົງການປ້ອງກັນຊາຍແດນ ຂອງສອງຝ່າຍແມ່ນອົງການຮັບຜິດຊອບທີ່ກ່ຽວຂ້ອງຂອງລັດຖະບານຕົນ ເປັນຜູ້ແຕ່ງຕັ້ງ ແລະດຳເນີນວຽກງານ ດ້ວຍວິທີການພົບປະ ຫາລືກັນ. ເຈົ້າໜ້າທີ່ຕິດຕໍ່ພົວພັນ ແມ່ນຜູ້ຕາງໜ້າ ຂອງອົງການປ້ອງ ກັນຊາຍແດນ ເປັນຜູ້ແຕ່ງຕັ້ງ ແລະດຳເນີນວຽກງານດ້ວຍວິທີການພົບປະຫາລືກັນ.

## ມາດຕາ 23

ບັນດາອົງການວິຊາການ ທີ່ກ່ຽວຂ້ອງຂອງສອງຝ່າຍ ທີ່ໄດ້ຕັ້ງຢູ່ບັນດາເມືອງຕາມເຂດຊາຍແດນ (ພາສີ, ຜູ້ກວດກາການຄ້າ, ການປ້ອງກັນການແຜ່ລາມ ຂອງພະຍາດຕິດແປດ, ກວດກາສັດ ແລະພືດພັນຕ່າງໆ, ອົງການກວດກາຊາຍແດນ ແລະອື່ນໆ ) ແລະລະຫວ່າງບັນດາອົງການໆຄ້າ ສາມາດດຳເນີນການຕິດຕໍ່ພົວພັນ ທາງດ້ານ

ວິຊາສະເພາະໄດ້. ລະຫວ່າງອົງການວິຊາການ ທີ່ກ່ຽວຂ້ອງ ສາມາດດຳເນີນການພົບປະຫາລືກັນ ເປັນປະຈຳໄດ້.

**<u>ມາດຕາ 24</u>**

ຖ້າມີຄວາມຈຳເປັນ ການພົບປະຫາລື ລະຫວ່າງ ອຳນາດການ ປົກຄອງທ້ອງຖິ່ນ ແລະ ລະຫວ່າງຜູ້ຕາງໜ້າອົງການປ້ອງກັນຊາຍແດນ ສາມາດຮັບເອົາການເຂົ້າຮ່ວມຂອງຜູ້ຕາງໜ້າ ຫລືຊ່ຽວຊານ ຂອງອົງການອື່ນໆທີ່ກ່ຽວຂ້ອງ, ແຕ່ຕ້ອງແຈ້ງໃຫ້ຝ່າຍນຶ່ງອີກຊາບລ່ວງໜ້າ. ສະຖານທີ່ປະຊຸມຢູ່ຝ່າຍໃດ ແມ່ນຝ່າຍ ນັ້ນເປັນຜູ້ຮັບຜິດຊອບ ຄ່າໃຊ້ຈ່າຍທັງໝົດ ຕະຫລອດໄລຍະການພົບປະຫາລືກັນ.ສະຖານທີ່ປະຊຸມ ແມ່ນຜັດ ປ່ຽນກັນ. ການປະຊຸມ ຈະເປີດຂຶ້ນ ລະຫວ່າງສອງຝ່າຍ ໃນເມື່ອສອງຝ່າຍ ເຫັນ ມີຄວາມຈຳເປັນ ຫຼື ມີການສະເໜີ ຂອງຝ່າຍໃດ ຝ່າຍນຶ່ງ.

## <u>ພາກທີ ຫົກ</u>
## ວ່າດ້ວຍບົດບັນຍັດສຸດທ້າຍ

**<u>ມາດຕາ 25</u>**

ໃນເມື່ອມີຄວາມເຫັນແຕກຕ່າງກັນ ແລະ ບໍ່ຕົກລົງກັນໄດ້ ໃນຂັ້ນທ້ອງຖິ່ນໃນການປະຕິບັດສັນຍາ ສະບັບນີ້, ຈະຕ້ອງລາຍງານໄປຍັງ ລັດຖະບານ ຂອງຕົນໂດຍທັນທີ, ພ້ອມທັງຕ້ອງແກ້ໄຂ ບັນຫາໂດຍສັນຕິວິທີ. ກ່ອນຂໍ້ຂັດແຍ່ງ ຈະໄດ້ຮັບການແກ້ໄຂ, ທັງສອງຝ່າຍຕ້ອງຮັກສາ ການຕິດຕໍ່ພົວພັນ ອັນປົກກະຕິບໍ່ໄດ້ເຮັດໃຫ້ສະພາບການເກີດສັບສົນຂຶ້ນຕື່ມ.

**<u>ມາດຕາ 26</u>**

ສັນຍາສະບັບນີ້ ຕ້ອງໄດ້ຮັບການກວດຜ່ານ ແລະອະນຸມັດ ຈາກລັດຖະບານທັງສອງຝ່າຍ ແລະມີຜົນບັງຄັບໃຊ້ໄດ້ ນັບແຕ່ມື້ແລກປ່ຽນໃບແຈ້ງອະນຸມັດ ຢ່າງເປັນທາງການ ເປັນຕົ້ນໄປ.

ສັນຍາສະບັບນີ້ ມີຄຸນຄ່າໃຊ້ໄດ້ໃນກຳນົດ ໒ ປີ . ຖ້າຫາກວ່າ ບໍ່ມີຝ່າຍໃດຝ່າຍນຶ່ງແຈ້ງຈຸດປະສົງ ທີ່ຢາກຍົກເລີກສັນຍາ ດ້ວຍລາຍລັກອັກສອນ ກ່ອນ ໖ ເດືອນ

ຂອງກຳນົດສັນຍາ, ຖືວ່າສັນຍາສະບັບນີ້ ຈະໄດ້ຕໍ່ອາຍຸໄປອີກໃນຕົວ 2 ປີ ແລະ ຈະຕໍ່ອາຍຸຕໍ່ໆໄປເລີຍ ຕາມແບບວິທີດັ່ງກ່າວ.

ເຮັດທີ່......ປັກກິ່ງ......ວັນທີ 8 ຕຸລາ 1989......

ເປັນສອງສະບັບຕົ້ນ, ແຕ່ລະສະບັບຂຽນດ້ວຍ ພາສາລາວ ແລະ ພາສາຈີນ ທັງສອງພາສາມີຄຸນຄ່າເທົ່າກັນ.

ຜູ້ຕາງໜ້າທີ່ມີອຳນາດເຕັມ
ແທນ
ລັດຖະບານ ສປປລາວ



ຜູ້ຕາງໜ້າທີ່ມີອຳນາດເຕັມ
ແທນ
ລັດຖະບານ ສປ ຈີນ

刘述卿